**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ
ຫ້ອງການກະຊວງ

ເລກທີ 118 /ຫກຊ.ກຕຂ
ນະຄອນຫຼວງວຽງຈັນ, ວັນທີ 20 ມັງກອນ 2020

# ແຈ້ງການ

**ເຖິງ:** ຫົວໜ້າພະແນກໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ ທີ່ນັບຖື.
**ເລື່ອງ:** ການໂຈະການອອກອະນຸຍາດ ແລະ ຕິດຕາມກວດກາ ການເຄື່ອນໄຫວຂອງຮ້ານອິນເຕີເນັດກາເຟ.

- ອີງຕາມ ແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 2253/ຫສນຍ ລົງວັນທີ 25 ທັນວາ 2019 ເລື່ອງ: ທິດຊີ້ນຳກ່ຽວກັບສະພາບການຫຼິ້ນຫວຍເຖື່ອນ, ຕູ້ເກມ (SLOT MACHIME), ເກມອອນລາຍ ແລະ ທຸລະກິດຕ່າງໆທີ່ຜິດກົດໝາຍ.
- ອີງຕາມ ທິດຊີ້ນຳຂອງ ຄະນະນຳ ກະຊວງ ໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ ລົງວັນທີ 09 ມັງກອນ 2020.

ຫ້ອງການກະຊວງ ໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການ:

1. ໃຫ້ໂຈະການອອກອະນຸຍາດຮ້ານອິນເຕີເນັດກາເຟໃໝ່;
2. ໃຫ້ສຸມໃສ່ຕິດຕາມກວດກາການເຄື່ອນໄຫວຂອງຮ້ານອິນເຕີເນັດກາເຟ ທີ່ໄດ້ຮັບອະນຸຍາດຜ່ານມາ ຢ່າງໃກ້ຊິດ, ຖ້າພົບເຫັນຮ້ານໃດ ມີການເຄື່ອນໄຫວແບບບໍ່ຖືກຕ້ອງຕາມຂໍ້ຕົກລົງເລກທີ 828 ເຊັ່ນ: ມີການພະນັນ online, ເປັນແຫຼ່ງມົ້ວສຸມ, ມີຢາເສບຕິດ ແລະ ອື່ນໆ ແມ່ນໃຫ້ດຳເນີນມາດຕະການເດັດຂາດຕາມກົດໝາຍ ແລະ ລະບຽບການກຳນົດ, ພ້ອມທັງຖອນໃບອະນຸຍາດນັ້ນ

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ.

ຮ.ກ. ຫົວໜ້າຫ້ອງການ

ອະລະໄຊ ດາລາລອຍ

**ໝາຍເຫດ**

- ກົມເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ
- ເບີໂທ & ແຟັກ: 021 316563 & 316637

ກະຊວງໄປສະນີ
ໂທລະຄົມມະນາຄົມ ແລະ ການສື່ສານ
ເລກທີ 1864
ວັນທີ 26.12.19

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ເລກທີ 2253 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 25.12.2019

# ແຈ້ງການ

**ຮຽນ:** - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ ທີ່ນັບຖື.
- ທ່ານ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ.
- ທ່ານ ລັດຖະມົນຕີ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.
- ທ່ານ ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ເລື່ອງ:** ທິດຊີ້ນຳກ່ຽວກັບສະພາບການຫຼິ້ນຫວຍເຖື່ອນ, ຕູ້ເກມ (SLOT MACHINE), ເກມອອນລາຍ ແລະ ທຸລະກິດຕ່າງໆ ທີ່ຜິດກົດໝາຍ.

- ອີງຕາມການລາຍງານ ຂອງກະຊວງການເງິນ ແລະ ກະຊວງປ້ອງກັນຄວາມສະຫງົບ ຕໍ່ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 18 ທັນວາ 2019.
- ອີງຕາມການຕົກລົງ ແລະ ຊີ້ນຳ ຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 18 ທັນວາ 2019.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳ ຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ມາຍັງທ່ານ ຊາບດັ່ງນີ້:

**1)** ເຫັນດີໃຫ້ເພີ່ມການອອກຫວຍພັດທະນາ ຈາກ 1 ຄັ້ງຕໍ່ອາທິດ ເປັນ 2 ຄັ້ງຕໍ່ອາທິດ ຕາມການສະເໜີ. ພ້ອມກັນນັ້ນ ກໍໃຫ້ກະຊວງການເງິນ ເປັນໃຈກາງສົມທົບກັບກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພີ່ມທະວີການກວດກາ ແລະ ປາບປາມບັນຫາການຈຳໜ່າຍຫວຍເຖື່ອນ ຢ່າງເຂັ້ມງວດ ແລະ ເດັດຂາດ.

ນອກຈາກນັ້ນ, ມອບໃຫ້ກະຊວງການເງິນ ເປັນໃຈກາງສົມທົບກັບກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮ່າງລະບຽບການຄຸ້ມຄອງກິດຈະການຫວຍ ໂດຍໃຫ້ກຳນົດລະອຽດວ່າ ອັນໃດແມ່ນຫວຍທີ່ຖືກຕ້ອງ, ອັນໃດແມ່ນຫວຍເຖື່ອນ, ກົນໄກຄຸ້ມຄອງຫວຍແນວໃດ, ມາດຕະການປັບໃໝຕໍ່ຜູ້ຈຳໜ່າຍຫວຍເຖື່ອນ ແລະ ອື່ນໆ ໃຫ້ລະອຽດ.

**2)** ໃຫ້ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໂຈະການອອກອະນຸຍາດຮ້ານອິນເຕີເນັດຄາເຟໃໝ່ ແລະ ໃຫ້ສຸມໃສ່ຕິດຕາມກວດກາການເຄື່ອນໄຫວຂອງຮ້ານອິນເຕີເນັດຄາເຟ ທີ່ໄດ້ຮັບອະນຸຍາດແລ້ວຜ່ານມາ ຢ່າງໃກ້ຊິດ, ຖ້າພົບເຫັນຮ້ານໃດ ມີການເຄື່ອນໄຫວແບບບໍ່ຖືກຕ້ອງ ແມ່ນໃຫ້ດຳເນີນມາດຕະການເດັດຂາດ ຕາມກົດໝາຍ ແລະ ລະບຽບການກຳນົດ, ພ້ອມທັງ ໃຫ້ຖອນໃບອະນຸຍາດ.

3) ໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນໃຈກາງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພີ່ມທະວີການກວດກາສະພາບການຫຼິ້ນ Slot Machine ແລະ ເກມອອນລາຍເຖື່ອນ ແບບບໍ່ຖືກຕ້ອງ ແລະ ຜິດກົດໝາຍ ໂດຍໃຫ້ລົງສົມທົບກັບເມືອງ ແລະ ບ້ານ ຊຸ່ມກວດຢ່າງເປັນປົກກະຕິ, ກໍລະນີ ພົບເຫັນຜູ້ກະທຳຜິດ ແມ່ນໃຫ້ມີມາດຕະການເດັດຂາດ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງກຳນົດ.

4) ໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ອອກຂ່າວໂຄສະນາເຜີຍແຜ່ ທາງໂທລະພາບ, ວິທະຍຸກະຈາຍສຽງ, ໜັງສືພິມ ແລະ ວາລະສານຕ່າງໆ ເພື່ອໃຫ້ປະຊາຊົນຊົນໄດ້ຮັບຮູ້ ແລະ ເຂົ້າໃຈ ຕໍ່ຜົນຮ້າຍຂອງປະກົດການຫຍໍ້ທໍ້ ທີ່ຕິດພັນກັບການພະນັນ, ໂດຍສະເພາະການຊື້-ຂາຍ ຫວຍເຖື່ອນ ແມ່ນຜິດກົດໝາຍ ແລະ ບໍ່ເປັນການປະກອບສ່ວນ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ.

5) ໃຫ້ກະຊວງປ້ອງກັນຄວາມສະຫງົບ ສືບຕໍ່ຮ່ວມມືກັບ ສປ ຈີນ ໃນການຕິດຕາມ ແລະ ປາບປາມກຸ່ມແກ໊ງຕ່າງປະເທດ ແລະ ພາຍໃນ ທີ່ເຄື່ອນໄຫວໂຈນລະກຳ ແລະ ເຈາະເອົາຂໍ້ມູນບັນຊີເງິນຝາກ ຜ່ານລະບົບອອນລາຍ ເພື່ອຍັກຍອກເອົາເງິນຈາກບັນຊີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ຄະນະ ຫສນຍ | 04 ສະບັບ |
| 4. ກົມກວດກາ, ຫສນຍ | 01 ສະບັບ |
| 5. ກົມຄົ້ນຄວ້າ-ສັງລວມ, ຫສນຍ | 01 ສະບັບ |
| 6. ສຳເນົາ | 01 ສະບັບ |